**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ປະທານປະເທດ**

ເລກທີ......200....../ປປທ

ນະຄອນຫຼວງວຽງຈັນ, ວັນທີ 10 ພະຈິກ 2020...

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ວ່າດ້ວຍການປະກາດຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນ
### ສະມາຊິກສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງປີ 2015 ມາດຕາ 67 ຂໍ້ 9;
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງ ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 83/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11;
- ອີງຕາມ ໜັງສືສະເໜີຂອງ ຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 22/ຄປຈ, ລົງວັນທີ 28 ຕຸລາ 2020.

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1.** ປະກາດ ຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຊຸດທີ IX ມີຈຳນວນ 224 ທ່ານ, ເລືອກເອົາ 164 ທ່ານ; ຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ II ມີຈຳນວນ 789 ທ່ານ, ເລືອກເອົາ 492 ທ່ານ ລະອຽດດັ່ງນີ້:

1. **ນະຄອນຫຼວງວຽງຈັນ:**
   - ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ມີຈຳນວນ 23 ທ່ານ, ເລືອກເອົາ 18 ທ່ານ.
   - ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ມີຈຳນວນ 49 ທ່ານ, ເລືອກເອົາ 31 ທ່ານ.

2. ແຂວງ ຜົ້ງສາລີ:

- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ ມີຈຳນວນ 9 ທ່ານ, ເລືອກເອົາ 6 ທ່ານ.
- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນແຂວງ ມີຈຳນວນ 38 ທ່ານ, ເລືອກເອົາ 24 ທ່ານ.

3. ແຂວງຫຼວງນ້ຳທາ:

- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 3 ແຂວງຫຼວງນ້ຳທາ ມີຈຳນວນ 9 ທ່ານ, ເລືອກເອົາ 6 ທ່ານ.
- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນແຂວງ ມີຈຳນວນ 31 ທ່ານ, ເລືອກເອົາ 21 ທ່ານ.

4. ແຂວງ ອຸດົມໄຊ:

- ຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ມີຈຳນວນ 10 ທ່ານ, ເລືອກເອົາ 7 ທ່ານ.
- ຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງ ມີຈຳນວນ 39 ທ່ານ, ເລືອກເອົາ 25 ທ່ານ.

5. ແຂວງ ບໍ່ແກ້ວ:

- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ມີຈຳນວນ 9 ທ່ານ, ເລືອກເອົາ 6 ທ່ານ.
- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນແຂວງ ມີຈຳນວນ 31 ທ່ານ, ເລືອກເອົາ 21 ທ່ານ.

6. ແຂວງ ຫຼວງພະບາງ:

- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ ມີຈຳນວນ 13 ທ່ານ, ເລືອກເອົາ 10 ທ່ານ.
- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນແຂວງ ມີຈຳນວນ 57 ທ່ານ, ເລືອກເອົາ 33 ທ່ານ.

7. ແຂວງ ໄຊຍະບູລີ:

- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ມີຈຳນວນ 12 ທ່ານ, ເລືອກເອົາ 9 ທ່ານ.
- ຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງ ມີຈຳນວນ 54 ທ່ານ, ເລືອກເອົາ 32 ທ່ານ.

8. ແຂວງ ຫົວພັນ:

- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ມີຈຳນວນ 10 ທ່ານ, ເລືອກເອົາ 7 ທ່ານ.
- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນແຂວງ ມີຈຳນວນ 49 ທ່ານ, ເລືອກເອົາ 29 ທ່ານ.

9. ແຂວງ ຊຽງຂວາງ:

- ຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ ມີຈຳນວນ 10 ທ່ານ, ເລືອກເອົາ 7 ທ່ານ.
- ຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງ ມີຈຳນວນ 39 ທ່ານ, ເລືອກເອົາ 25 ທ່ານ.

10. ແຂວງ ວຽງຈັນ:

- ຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ມີຈຳນວນ 13 ທ່ານ, ເລືອກເອົາ 10 ທ່ານ.
- ຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງ ມີຈຳນວນ 53 ທ່ານ, ເລືອກເອົາ 31 ທ່ານ.

11. ແຂວງ ບໍລິຄຳໄຊ:

- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ ມີຈຳນວນ 10 ທ່ານ, ເລືອກເອົາ 7 ທ່ານ.
- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນແຂວງ ມີຈຳນວນ 39 ທ່ານ, ເລືອກເອົາ 25 ທ່ານ.

12. ແຂວງ ຄຳມ່ວນ:

- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ມີຈຳນວນ 12 ທ່ານ, ເລືອກເອົາ 9 ທ່ານ.
- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນແຂວງ ມີຈຳນວນ 50 ທ່ານ, ເລືອກເອົາ 30 ທ່ານ.

13. ແຂວງ ສະຫວັນນະເຂດ:

- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ມີຈຳນວນ 25 ທ່ານ, ເລືອກເອົາ 20 ທ່ານ.
- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນແຂວງ ມີຈຳນວນ 69 ທ່ານ, ເລືອກເອົາ 39 ທ່ານ.

14. ແຂວງ ສາລະວັນ:

- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ ມີຈຳນວນ 12 ທ່ານ, ເລືອກເອົາ 9 ທ່ານ.
- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນແຂວງ ມີຈຳນວນ 44 ທ່ານ, ເລືອກເອົາ 28 ທ່ານ.

15. ແຂວງ ຈຳປາສັກ:

- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ມີຈຳນວນ 20 ທ່ານ, ເລືອກເອົາ 15 ທ່ານ.
- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນແຂວງ ມີຈຳນວນ 55 ທ່ານ, ເລືອກເອົາ 35 ທ່ານ.

16. ແຂວງ ເຊກອງ:

- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ ມີຈຳນວນ 9 ທ່ານ, ເລືອກເອົາ 6 ທ່ານ.
- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນແຂວງ ມີຈຳນວນ 30 ທ່ານ, ເລືອກເອົາ 21 ທ່ານ.

17. ແຂວງ ອັດຕະປື:

- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື ມີຈຳນວນ 9 ທ່ານ, ເລືອກເອົາ 6 ທ່ານ.
- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນແຂວງ ມີຈຳນວນ 31 ທ່ານ, ເລືອກເອົາ 21 ທ່ານ.

18. ແຂວງ ໄຊສົມບູນ:

- ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ແຂວງ ໄຊສົມບູນ ມີຈຳນວນ 9 ທ່ານ, ເລືອກເອົາ 6 ທ່ານ.
- ຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງ ມີຈຳນວນ 31 ທ່ານ, ເລືອກເອົາ 21 ທ່ານ.

**ມາດຕາ 2.** ມອບໃຫ້ຄະນະກຳມະການເລືອກຕັ້ງລະດັບຊາດ, ຄະນະກຳມະການເລືອກຕັ້ງຂັ້ນທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດຕາມລັດຖະດຳລັດສະບັບນີ້.

**ມາດຕາ 3.** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ